ໃຫ້ສຳເນົາພຣີຫນຶ່ງສະບັບ ເຊິ່ງມີໃບສະໝັກຂໍການຊ່ວຍເຫຼືອດ້ານການເງິນ, ນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ສັງລວມພາສາທົ່ວໄປ, ແລະ ນະໂຍບາຍຂອງການອອກໃບບິນ ແລະ ການເກັບເງິນທີ່ເປັນພາສາອັງກິດ, ສະເປນ, ແລະ ພາສາອື່ນທີ່ໄດ້ຕາມເງື່ອນໄຂ ຊຶ່ງໄດ້ອະທິບາຍຢູ່ໃນນະໂຍບາຍຂອງການຊ່ວຍ ເຫຼືອດ້ານການເງິນໂດຍ:

- ຕິດຕໍ່ຫາພະແນກຕ້ອນຮັບ/ລົງທະບຽນ
- ໂທ 281.312.4012 ຫຼື 281.312.4000, ກົດ 5
- ຂໍໃບສະໝັກທາງໄປສະນີ:
  Attn: Financial Assistance
  300 Kingwood Medical Drive
  Kingwood, TX 77339
- ດາວໂຫລດໃບສະຫມັກຈາກເວັບໄຊຂອງ Hermann Surgical Hospital First Colony website: (Memorial Hermann Surgical Hospital Kingwood): http://www.memorialhermannkingwood.com/financial-assistance-program/

**Memorial Hermann Surgical Hospital Kingwood**

ເພື່ອເບິ່ງວ່າທ່ານມີຄຸນສົມບັດເໝາະສົມໄດ້ຮັບການຊ່ວຍເຫຼືອດ້ານການເງິນ, Medicaid, Medicare, ຫຼື ໂປຣແກຣມອື່ນໆ, ແລະ ໃຫ້ຄວາມຊ່ວຍເຫຼືອໃນການສະໝັກຢ່າງເປັນຄວາມລັບຟຣີ, ຕິດຕໍ່ຫາ:

**ບໍລິການທຸລະກິດຄົນເຈັບ**
Attention: Financial Assistance
300 Kingwood Medical Drive
Kingwood, TX 77339

ເບີໂທລະສັບ: 281.312.4012 ຫຼື
281.312.4000, ກົດ 5

ວັນສຸກ: 8 ໂມງເຊົ້າ - 5 ໂມງແລງ
ວັນຈັນ - ວັນພະຫັດ: 8 ໂມງເຊົ້າ - 7 ໂມງແລງ

ວັນທີພິມ: 1 ຕຸລາ, 2018

4412324

# ສັງລວມການຊ່ວຍເຫຼືອດ້ານການເງິນໃຫ້ຄົນເຈັບ

## ສັງລວມພາສາທົ່ວໄປ



ຕອບຄຳຖາມສຳຄັນ:

- ມີບໍລິການຫຍັງແດ່?
- ຂ້ອຍສະໝັກຂໍການຊ່ວຍເຫຼືອໄດ້ແນວໃດ?
- ແມ່ນໃຜແດ່ມີຄຸນສົມບັດເໝາະສົມໄດ້ຮັບການຊ່ວຍເຫຼືອ?
- ຂີດຈຳກັດຂອງລາຍໄດ້ແມ່ນເທົ່າໃດ?
- ຈະເປັນແນວໃດຖ້າລາຍໄດ້ຂອງຂ້ອຍບໍ່ໄດ້ຕາມຂີດຈຳກັດ?
- ຂ້ອຍສາມາດເອົາໃບສະໝັກໄດ້ຈາກໃສ?

# ນະໂຍບາຍການຊ່ວຍເຫຼືອດ້ານການເງິນ (FAP)

Memorial Hermann Surgical Hospital Kingwood ສະເໜີການຊ່ວຍເຫຼືອດ້ານການເງິນໃຫ້ຄົນເຈັບທີ່ມີຄຸນສົມບັດເໝາະສົມ ໂດຍອີງໃສ່ລາຍໄດ້, ຈຳນວນຄົນໃນຄອບຄົວ ແລະ ລະດັບຄວາມທຸກຍາກຂອງລັດຖະບານກາງ (Federal Poverty Level) ຫຼື ກໍລະນີທີ່ໄດ້ຮັບສ່ວນຫຼຸດເຕັມສ່ວນ ຫຼື ການເບິ່ງແຍງທີ່ມີຄວາມຈຳເປັນທາງດ້ານການແພດຢູ່ໃນໂຮງໝໍ ຄົນເຈັບທີ່ຕ້ອງການຄວາມຊ່ວຍເຫຼືອດ້ານການເງິນຕ້ອງສະໝັກຂໍໂປຣແກຣມ ທີ່ໄດ້ສັງລວມຢູ່ໃນເອກະສານນີ້.

## ການບໍລິການຫຍັງແດ່ທີ່ໄດ້ຮັບການຄຸ້ມຄອງ?

ນະໂຍບາຍຂອງການຊ່ວຍເຫຼືອດ້ານການເງິນ (FAP) ທີ່ຄຸ້ມຄອງການບໍລິການໃນກໍລະນີສຸກເສີນແລະ ການບໍລິການທີ່ມີຄວາມຈຳເປັນດ້ານການແພດທີ່ມີໃຫ້ຢູ່ Memorial Hermann Surgical Hospital Kingwood.

ນະໂຍບາຍການຊ່ວຍເຫຼືອດ້ານການເງິນບໍ່ໄດ້ຄຸ້ມຄອງ: ຂັ້ນຕອນເສີມຄວາມງາມ, ການບໍລິການຕ່າງໆທີ່ຈັດຫາໂດຍ ແພດ ແລະ ຜູ້ຈັດຫາອື່ນໆທີ່ປິ່ນປົວທ່ານຢູ່ Memorial Hermann Surgical Hospital Kingwood ແຕ່ວ່າບໍ່ແມ່ນລູກຈ້າງຂອງໂຮງໝໍ, ຫຼື ຜູ້ຈັດຫາທີ່ອອກໃບບິນແຍກອອກຈາກໂຮງໝໍສຳລັບຄ່າບໍລິການຂອງພວກເຂົາ.

## ວິທີສະໝັກ:

ນະໂຍບາຍຂອງການຊ່ວຍເຫຼືອດ້ານການເງິນ (Financial Assistance Policy) ແລະ ໃບສະໝັກສາມາດໄປເອົາໄດ້ດ້ວຍຕົນເອງ, ທາງອີເມວ, ຈາກທາງໂທລະສັບ ແລະ ຈາກເວັບໄຊຂອງ Memorial Hermann Surgical Hospital Kingwood. ຕອບຕາມໃບສະໝັກໃຫ້ສຳເລັດ, ປະກອບເອກະສານທີ່ຕ້ອງການ ແລະ ສົ່ງໄປຫາພະແນກຕ້ອນຮັບ/ລົງທະບຽນຂອງໂຮງໝໍ (Hospital Admission/ Registration Department) ຫຼື ສົ່ງໄປຫາທີ່ຢູ່ທີ່ຢູ່ດ້ານຫຼັງຂອງແຜ່ນພັບສະບັບນີ້.

## ຂີດຈຳກັດຂອງລາຍໄດ້

ໜຶ່ງໃນປັດໃຈທີ່ເໝາະສົມແມ່ນລາຍໄດ້ຊຶ່ງອີງໃສ່ຕາຕະລາງລຸ່ມນີ້:

| ຄູ່ມືສຳລັບຄົນທຸກຍາກ 2019 | |
|---|---|
| ບຸກຄົນທີ່ຢູ່ໃນຄອບຄົວ/ຄົວເຮືອນ | ລາຍໄດ້ຕໍ່ປີ |
| 1 | $ 12,490 |
| 2 | $ 16,910 |
| 3 | $ 21,330 |
| 4 | $ 25,750 |
| 5 | $ 30,170 |
| 6 | $ 34,590 |
| 7 | $ 39,010 |
| 8 | $ 43,430 |

ສຳລັບຄອບຄົວ/ຄົວເຮືອນ ທີ່ມີຫຼາຍກວ່າ 8 ຄົນ: ເພີ່ມໃສ່ $4,420 ໃຫ້ແຕ່ລະຄົນທີ່ເພີ່ມເຂົ້າມາ.

## ແມ່ນໃຜແດ່ມີຄູນສົມບັດເໝາະສົມໄດ້ຮັບການຊ່ວຍເຫຼືອດ້ານການເງິນ?

ຈຳນວນເງິນທີ່ຂໍຈາກການຊ່ວຍເຫຼືອດ້ານການເງິນ ແມ່ນອີງໃສ່ລາຍໄດ້ຂອງທ່ານ, ຈຳນວນຂອງຄົນໃນຄອບຄົວຂອງທ່ານ ແລະລະດັບຄວາມທຸກຍາກຂອງຣັຖບານກາງ (Federal Poverty Level). ຄົນເຈັບທີ່ມີລາຍໄດ້ຢູ່ໃນຄອບຄົວ 200% ຂອງລະດັບຄວາມທຸກຍາກຂອງຣັຖບານກາງ ຫຼື ໜ້ອຍກວ່ານັ້ນ ອາດຈະມີສິດໄດ້ຮັບສ່ວນຫຼຸດ 100%. ຄົນເຈັບທີ່ມີລາຍໄດ້ຢູ່ໃນຄອບຄົວຫຼາຍກວ່າ 200% ຂອງລະດັບຄວາມທຸກຍາກຂອງຣັຖບານກາງອາດຈະມີສິດໄດ້ຮັບສ່ວນຫຼຸດ.

ເບິ່ງຂໍ້ມູນລະອຽດໃນນະໂຍບາຍທີ່:
**http://memorialhermannkingwood.com/financial-assistance-program/**

ຄົນເຈັບທີ່ເໝາະສົມຈະໄດ້ຮັບການຊ່ວຍເຫຼືອຈະບໍ່ຖືກໄລ່ເງິນເພີ່ມໃນກໍລະນີສຸກເສີນ ຫຼື ການເບິ່ງແຍງທີ່ມີຄວາມຈຳເປັນທາງດ້ານການແພດ ເກີນກວ່າຈຳນວນເງິນທີ່ອອກບິນ (AGB, Amounts Generally Billed) ໃຫ້ຄົນເຈັບຜູ່ມີປະກັນໄພເທົ່ານັ້ນ.

ແບບຮູບຖ່າຍຕິດບັດປະຈຳຕົວຕໍ່ໄປນີ້ແມ່ນສາມາດຍອມຮັບໄດ້ໃນການພິສູດຄວາມເປັນຕົວຕົນຂອງທ່ານ:

- ໃບຂັບຂີ່ ຫຼື ບັດປະຈຳຕົວທີ່ລັດເປັນຜູ້ອອກໃຫ້
- ບັດປະຈຳຕົວນັກຮຽນ
- ໜັງສືຜ່ານແດນ (ສະຫະລັດອາເມລິກາ ຫຼື ຄົນຕ່າງປະເທດ)
- ເອກະສານຄົນອົບພະຍົບໃນສະຫະລັດອາເມລິກາ
- ບັດປະຈຳຕົວທີ່ອອກໃຫ້ໂດຍກົງສຸນຕ່າງປະເທດ
- ບັດເຄຣດິດ (ມີຮູບຕິດ)